ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ການປູກເຂົ້າ

(ສະບັບທົດລອງໃຊ້)



ຂໍ້ມູນຈາກບ້ານນາຂອບ

ເມືອງເຟືອງ, ແຂວງວຽງຈັນ

ຂຽນໂດຍ: ທ່ານ ແກ່ນ ກັນລະຍາ

2007

ຄວາມຮູ້ທ້ອງຖິ່ນ

# "ການປູກເຂົ້າ"

ຂໍ້ມູນຈາກ: ບ້ານນາຂອບ ເມືອງເຟືອງ ແຂວງວຽງຈັນ

ຂຽນໂດຍ: ທ່ານ ແກ່ນ ກັນລະຍາ

ຮຽບຮຽງໂດຍ: ອ.ຈ ບຸນທິງ

ອ.ຈ ໂອທອງ

ອ.ຈ ຂວັນແກ້ວ

ອ.ຈ ໄພໄຊ

ພິມແລະຈັດໜ້າ: ນ. ສຸກັນຍາ ສີວິໄຊ

ແຕ້ມໂດຍ: ທ. ສິດປະກອບ

ເຈົ້າຂອງ: ຫ້ອງການສຶກສາເມືອງເຟືອງ, ແຂວງວຽງຈັນ

ແລະສູນອົບຮົມຮ່ວມພັດທະນາ

ອຸປະຖຳໂດຍ:

New Zealand Agency for International

Development ( NZAID )

# ຄຳນຳ

ປື້ມເຫລັ້ມນີ້ເປັນຜົນງານການຂຽນ ແລະ ໃຫ້ຂໍ້ມູນຂອງຄູອາຈານແລະຊາວ ບ້ານນາຂອບ ເມືອງເຟືອງ ແຂວງວຽງຈັນ ຊຶ່ງເປັນການຮຶບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປື້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກສາພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປື້ມເຫລັ້ມນີ້ຊຶ່ງເປັນສະບັບທົດລອງໃຊ້ ແລະ ຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກພ້ອມກັນນັ້ນຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ.

**ຄະນະຈັດທຳ**

## ຄວາມເປັນມາ

ບ້ານນາຂອບເປັນບ້ານທີ່ມີນາອ້ອມຮອບຖືວ່າເປັນບ້ານທີ່ອຸດົມສົມບູນໃນເຂດນີ້; ເຊິ່ງໃນບົດນີ້ຂໍສະເໜີການປູກເຂົ້າ

## ຂັ້ນຕອນການປູກເຂົ້າ

- ເຂົ້າແມ່ນອາຫານຫລັກເພື່ອຫລໍ່ລ້ຽງຊີວິດຂອງມະນຸດແລະຂັ້ນຕອນການປູກເຂົ້າຕ່າງໆມີດັ່ງນີ້:

1. ການກະກຽມແນວພັນ



2. ການລົງແຊ່ກ້າ 2 – 3 ວັນ



3. ການບົ່ມກ້າ 2 – 3 ວັນ



ກ້າທີ່ບົ່ມແລ້ວກຽມເອົາລົງຫວ່ານ

4. ເມື່ອກ້າມີອາຍຸໄດ້ປະມານ 20 – 27 ວັນກໍ່ໃຫ້ກະ
ກຽມການດໍາ



ຮູບການຫລົກກ້າເພື່ອກະກຽມດໍານາ

5. ການດຳນາ



6. ການບົວລະບັດຮັກສາ



7. ການເກັບກ່ຽວ



8. ການຕີເຂົ້າ



9. ການມັ່ງມັດ



ອູບເຂົ້າ ຫລື ຮີນເຂົ້າ

## ສາລະໜ້າຮູ້

**ຜົນໄດ້ຮັບຈາກການປູກເຂົ້າ**

- ເຮັດໃຫ້ຄອບຄົວມີຢູ່ມີກິນ
- ສ້າງລາຍໄດ້ໃຫ້ແກ່ຄອບຄົວ
- ເປັນການສຶກສາແລະສືບທອດມູນເຊື້ອອັນດຸໝັ່ນ

**ລະດູການສຳລັບການປູກເຂົ້າ**

ເດືອນມິຖຸນາຫາເດືອນພະຈິກຂອງທຸກໆປີແມ່ນລະດູການປູກເຂົ້ານາປີ

ເດືອນທັນວາຫາເດືອນເມສາຂອງທຸກໆປີແມ່ນການປູກເຂົ້ານາແຊງ

ສຳລັບລະດູການທີ່ປູກງ່າຍແລະໄດ້ຮັບຜົນດີແມ່ນໄລຍະເດືອນມິຖຸນາຫາເດືອນພະຈິກຜະລິດເຂົ້ານາປີ, ຖ້າຜູ້ໃດປູກໃນໄລຍະເດືອນສິງຫາ - ເດືອນກັນຍາຈະເຮັດໃຫ້ຜົນຜະລິດບໍ່ໄດ້ຮັບຜົນດີພໍສົມຄວນ, ສ່ວນສັດຕູຂອງຕົ້ນເຂົ້າແມ່ນໄດ້ແກ່ສັດຈຳພວກບົ້ງ, ຕັກແຕນ, ເພ້ຍໄພ່, ຍັ້ນ, ໜູ, ຫອຍປາກກວ້າງ, ງົວແລະຄວາຍເປັນຕົ້ນ.



## ນິທານເລື່ອງ

## " ສຸດຍອດຢາວິເສດ "

ແຕ່ກີ້ແຕ່ກ່ອນ, ຄົນບູຮານເພິ່ນອາໄສກິນພືດແລະຊີ້ນເປັນອາຫານຕົ້ນຕໍ, ແຕ່ລະມື້ແຕ່ລະວັນໄດ້ອອກໄປຫາເມື່ອໄດ້ມາແລ້ວກໍກິນຢູ່ບ່ອນທີ່ໄດ້ນັ້ນພ້ອມ; ບໍ່ມີໄຟ, ບໍ່ມີເຄື່ອງປະກອບອາຫານຄືດັ່ງປະຈຸບັນ

ມາຮອດໄລຍະໜຶ່ງເທວະດາຈຶ່ງເຫັນຄວາມທຸກທໍລະມານຂອງມະນຸດຈຶ່ງໄດ້ໂຜດທານຢາວິເສດໃຫ້ເພື່ອບັນເທົາຄວາມຫິວໂຫຍແລະອິດເມື່ອຍຈຳນວນສອງເມັດໃຫຍ່ ( ເທົ່າໝາກໂຕ່ນ ), ມະນຸດຈຶ່ງຕັ້ງຊື່ວ່າເມັດເຂົ້າໝາກໂຕ່ນແລ້ວຈຶ່ງເອົາມາແບ່ງປັນກັນ 1 ເມັດ, ສ່ວນອີກ 1 ເມັດແມ່ນເອົາແຮໄວ້ໃນເວລາຈຳເປັນ, ຫລັງຈາກນັ້ນບາງຄົນກໍບໍ່ກິນ ເລີຍເອົາໄປຝັງດິນຝັງຕົມໄວ້. ພໍຮອດເດືອນມິຖຸນາເມື່ອແຊ່ໄວ້ຍາມຈຳເປັນທີ່ສຸດຈຶ່ງເອົາມາກິນບາງຄົນກໍກິນໝົດ.

ເມື່ອຝັງດິນເມັດເຂົ້ານັ້ນກໍແຕກຈາວອອກມາ, ພໍຮອດເດືອນຕຸລາຫາເດືອນພະຈິກຕົ້ນເຂົ້າກໍຈໍ່ດອກອອກໝາກ, ມັນແກ່ແລ້ວຈຶ່ງຕັດມາກິນເຫັນວ່າມີເຫື່ອມີແຮງກວ່າເກົ່າເອົາແທ້ເອົາວ່າຈຶ່ງພາກັນແບ່ງໄວ້ປູກໃນເດືອນມິຖຸນາຂອງປີຕໍ່ມາອີກ, ຕໍ່ໆມາຈົນເຖິງປະຈຸບັນເມື່ອມີຄວາມອິດເມື່ອຍຫິວໂຫຍແລ້ວກິນອັນໃດກໍບໍ່ເຊົາເມື່ອຍ

ແຕ່ເມື່ອຍກິນຢາວິເສດນີ້ກໍຮູ້ສຶກວ່າມີເຫື່ອມີແຮງຂຶ້ນມາສາມາດເຮັດໄດ້ທຸກສິ່ງທຸກຢ່າງມາໂດຍຕະຫລອດ, ການປູກເຂົ້າກໍຕ້ອງປູກໂດຍຕະຫລອດມາຕາມທີ່ເລົ່າຂານມາ.



## ເຊີ້ງ: ແຂ່ງຂັນກັນດຳນາ

ໂຮ............................ຮິ້ວ

ເອົາມາເຮົາມາ ດຳນາຊ່ວຍກັນ
ທ້າວເພັດທ້າວພັນ ນາງຈັນນາງແກ້ວ
ໃຫ້ດຳເປັນແຖວ ຕົ້ນກ້າຈຶ່ງງາມ
ບໍ່ຮູ້ໃຫ້ຖາມ ຜູ້ໃຫຍ່ເພິ່ນເຄີຍ
ຜູ້ໃດບໍ່ເຄີຍ ໄຈ້ກ້າຫລຸດລິ້ນ
ດຳເລິກດຳຕື້ນ ຕ້ອງໃຫ້ພໍດີ
ມັນມີວິທີ ຫລັກການຂອງມັນ
ແຕ່ສິ່ງສຳຄັນ ຕົ້ນກ້າບໍ່ຕາຍ
ເພື່ອນຍິງເພື່ອນຊາຍ ເຮັດໄດ້ທຸກຄົນ
ພວກເຮົາຢ່າວິນ ນອນຢູ່ລ້າໆ
ເລື່ອງການດຳນາ ພໍ່ແມ່ເຄີຍສອນ
ດຳຕັ້ງດຳນອນ ດຳເລິກດຳຕື້ນ
ເຈົ້າບໍ່ຕ້ອງຟື້ນ ຈຳໄວ້ໃສ່ໃຈ
ຢ່າໄປຫລົງໄຫລ ຫາຫລິ້ນໄລເລ
ເປັນຄົນເສເພ ຊາວບ້ານເບື່ອໜ່າຍ
ເປັນຄົນບອກງ່າຍ ຊາວບ້ານຮັກແພງ
ທັງເປັນແອ່ນແຍງ ໃຫ້ພວກຮຸ່ນນ້ອງ
ພວກເຮົາພີ່ນ້ອງ ມາຮ່ວມໂຮມແຮງ

ໂຮ..................................ຮິ້ວ

## *ເພງ: ຄິດຮອດບ້ານນາ*

| | |
|---|---|
| ⌖ ອາຊີບ | ທຳໄຮ່ໄຖນາ |
| ແຕ່ດົນນານມາ | ພໍ່ແມ່ເຄີຍສອນ |
| ບ້ານນາເປັນ | ບ້ານເກີດເມືອງນອນ |
| ເຖິງໄດ້ຈາກຈອນ | ຫົວໃຈຍັງຫ່ວງຫາ |
| ⌖ ⌖ ຄິດຮອດ | ຂ້ອຍຄິດຮອດຢູ່ບໍ່ເຊົາ |
| ຢາກໄປພົບເຈົ້າ | ພໍ່ແມ່ອາວອາ |
| ອີກບໍ່ນານ | ຂ້ອຍຕ້ອງໄດ້ກັບມາ ( 2 ) |
| ມາພັດທະນາ | ສ້າງສາບ້ານເຮົາ |



## *ກາບ: ດິນດີເຂົ້າງາມ*

ດິນນາຂອບ ປູກເຂົ້າງາມຫລາຍ
ບໍ່ມີຊາຍ ມີຫີນເຈືອປົນ
ຮອດຍາມຝົນ ເດືອນຫ້າເດືອນຫົກ
ຝົນເລີ່ມຕົກ ເອົາກ້າດຳນາ
ສາມເດືອນກວ່າ ເກັບກ່ຽວພໍດີ
ແຕ່ລະປີ ສະເລ່ຍເຂົ້າໄດ້
ນ້ອຍແລະໃຫຍ່ 800 ຕໍ່ຄົນ
ເວົ້າເລື່ອງຈິງ ກໍຫາກມີໜ້ອຍ
ເພາະບໍ່ດ້ອຍ ການພັດທະນາ
ລຸງແລະປ້າ ພີ່ນ້ອງມີກິນ
ຍ້ອນວ່າດິນ ປູກໄດ້ຫລາຍອັນ
ແຖມດຸໝັ່ນ ເຂົ້ານາຈຶ່ງງາມ



## ບົດເລກທີ 1

( ສຳລັບນັກຮຽນປ.3 - ປ. 4 )

ລຸງຈັນເພງມີອາຊີບຊາວນາ, ໃນປີນີ້ລາວໄດ້ເຂົ້ານາຫລາຍກວ່າແຕ່ລະປີຜ່ານມາ. ລາວໃສ່ເຂົ້າປູກ 1 ກິໂລມີຜົນໄດ້ຮັບ 4 ກິໂລ

ຢາກຖາມພວກນ້ອງວ່າ:

- ຖ້າລາວໃສ່ເຂົ້າປູກ 5 ກິໂລຈະໄດ້ຮັບເຂົ້າຈັກກິໂລ ?
- ຖ້າລາວໃສ່ເຂົ້າປູກ 12 ກິໂລ ຈະໄດ້ຮັບເຂົ້າຈັກກິໂລ ?
- ຖ້າລາວໃສ່ເຂົ້າ 21 ກິໂລ ຈະໄດ້ເຂົ້າຈັກກິໂລ ?
- ຖ້າລາວໃສ່ເຂົ້າປູກ 100 ກິໂລ ຈະໄດ້ຮັບເຂົ້າທັງໝົດຈັກກິໂລ ?



## ເກມ: ບອກຊື່ເຂົ້າ

**ຈຸດປະສົງ:**

- ເພື່ອໃຫ້ນັກຮຽນບອກຊື່ເຂົ້າທີ່ພໍ່ແມ່ເພິ່ນເຄີຍເຮັດໄຮ່ເຮັດນາ

**ອຸປະກອນ:** ໄມ້ ຫລື ບີກ

**ເວລາ:** 15 ນາທີ

**ຈຳນວນຜູ້ຫລິ້ນ:** ບໍ່ຈຳກັດ

**ບາດກ້າວດຳເນີນກິດຈະກຳ**

1. ໃຫ້ນັກຮຽນເຮັດເປັນວົງມົນ
2. ຈາກນັ້ນໃຫ້ຄູພານັກຮຽນຮ້ອງເພງ ແລະ ສົ່ງໄມ້ໄປເລື້ອຍໆຈົນກວ່າຄູບອກໃຫ້ຢຸດ
3. ຖ້າໄມ້ນັ້ນຢູ່ນຳໃຜແມ່ນໃຫ້ບອກຊື່ເຂົ້າມາ 1 ຊະນິດ ເຊັ່ນ: ເຂົ້າກ່ຳ, ເຂົ້າໄຮ່........
4. ຖ້າໃຜເວົ້າບໍ່ໄດ້ແມ່ນໃຫ້ອອກຢູ່ກາງວົງແລະເຮັດກິດຈະກຳທີ່ຄູບອກ

